Food and Agriculture
Organization of the
United Nations

# ການລົງທຶນຢ່າງມີຄວາມຮັບຜິດຊອບ ໃນດ້ານສະບຽງອາຫານ, ກະສິກໍາ ແລະ ປ່າໄມ້ ໃນ ສປປ ລາວ: **ເປັນຫຍັງຈຶ່ງສໍາຄັນ.**

ການພັດທະນາທາງດ້ານກະສິກໍາ ແລະ ຊົນນະບົດ ຖືວ່າເປັນສອງເຄື່ອງມືຫຼັກ ໃນການຕໍ່ສູ້ການລົບລ້າງການອຶດຫິວ ແລະ ການລົບລ້າງຄວາມທຸກຍາກ ແບບຍືນຍົງ ແລະ ຫຼຸດຜ່ອນຜົນກະທົບດ້ານລົບທາງດ້ານເສດຖະກິດ-ສັງຄົມ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ, ການປ່ຽນແປງສະພາບດິນຟ້າອາກາດ ແລະ ການແຕກຕື່ນຈາກການແຜ່ລະບາດພະຍາດຕ່າງໆ ໂດຍສະເພາະພະຍາດລະບາດ ໂຄວິດ-19. ຂະແໜງ ການກະສິກໍາ (ລວມທັງປ່າໄມ້) ແມ່ນ ພື້ນ ຖານຫຼັກຂອງຍຸດທະສາດການພັດທະນາຂອງ ສປປ ລາວ ຊຶ່ງມັນ ໄດ້ກວມ ເອົາຂະແໜງແຮງງານ 70% ຂອງພົນລະເມືອງ. ເຖິງຢ່າງໃດກໍ່ຕາມ, ຂະແໜງ ກະສິກໍາ ແມ່ນປະກອບສ່ວນພຽງແຕ່ 16% GDP ຂອງປະເທດ, ເນື່ອງຈາກມີຫຼາຍ ປັດໃຈ ລວມທັງຜົນຜະລິດທີ່ຕໍ່າ ແລະ ການຜະລິດທີ່ ບໍ່ທັນສະໃໝ ທີ່ນອນຢູ່ໃນ ຫຼາຍໆບັນຫາ.

ເພື່ອແກ້ໄຂບັນຫາຕ່າງໆນີ້, ການລົງທຶນທັງພາກລັດ ແລະ ເອກະຊົນ ແມ່ນມີຄວາມຈໍາເປັນເພື່ອຍົກສູງສະມັດຕະພາບ ຂອງການຜະລິດ ແລະ ລາຍຮັບ ທາງດ້ານກະສິກໍາ, ໂດຍສະເພາະໃນເຂດຊົນນະບົດ. ໃນ ສປປ ລາວ, ການລົງ ທຶນເພີ່ມເຕີມ 41 ລ້ານ ໂດລາສະຫາລັດ ຕໍ່ປີ ແມ່ນມີຄວາມຈໍາເປັນ ເພື່ອໃຫ້ບັນລຸເປົ້າ ໝາຍສອງອັນທໍາອິດຂອງ SDGs ໃນປີ 2030, ໃນນັ້ນ 34 ລ້ານ ໂດລາສະຫາລັດ ແມ່ນສຸມໃສ່ສະເພາະຂະແໜງກະສິກໍາ[1].

---

## ການລົງທຶນທີ່ດີແມ່ນຫຍັງ?

*ການລົງທຶນທີ່ມີຄວາມຮັບຜິດຊອບ ໃນລະບົບກະສິກໍາ ແລະ ສະ ບຽງອາຫານ ທີ່ປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ, ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພສະນາການ, ສົ່ງເສີມຜົນຜະລິດໃຫ້ເພີ່ມຂຶ້ນ, ຍືນຍົງຂຶ້ນ ແລະ ມີສ່ວນຮ່ວມໃນ ລະບົບສະບຽງອາຫານ ແລະ ການນັບຖືສິດທິມະນຸດ.*

---

ໃນເວລາດຽວກັນ, ມັນເປັນສິ່ງສໍາຄັນທີ່ຕ້ອງເຂົ້າໃຈວ່າ ບໍ່ແມ່ນການລົງທຶນທຸກ ປະ ເພດທີ່ສາມາດປະກອບສ່ວນເພື່ອບັນລຸເປົ້າໝາຍເຫຼົ່ານີ້.

ການລົງທຶນບາງຢ່າງກ່ຽວຂ້ອງກັບການກໍ່ໃຫ້ເກີດຄວາມສ່ຽງສູງ ຕໍ່ກັບຜູ້ກ່ຽວຂ້ອງ, ເຊັ່ນວ່າການລະເມີດສິດຄອບຄອງການນໍາໃຊ້ທີ່ດິນທີ່ຖືກຕ້ອງຕາມກົດໝາຍ, ການລ່ວງລະເມີດສິດທິແຮງງານ, ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພໃນການເຮັດວຽກງານ.

[1]http://www.fao.org/3/a-i4951e.pdf

### ຜົນກະທົບ ຂອງການແຜ່ລະບາດ ພະຍາດ ໂຄວິດ-19 ຕໍ່ກັບ ຂະແໜງ ກະສິ ກໍາ ໃນ ສປປ ລາວ; ເປັນເຫດຜົນ ຫຼາຍຢ່າງໃນ ການລົງທຶນຢ່າງມີຄວາມຮັບຜິດ ຊອບ.

ໃນ ສປປ ລາວ, ຜົນກະທົບຂອງການແຜ່ລະບາດຂອງ ພະຍາດຕໍ່ກັບສຸ ຂະພາບສາທາລະນະສຸກແມ່ນບໍ່ຫຼາຍ ແລະຢູ່ໃນວົງຈໍາກັດ . ເຖິງຢ່າງໃດກໍ່ຕາມ, ສປປ ລາວ ກໍ່ບໍ່ສາມາດຫລີກລຽງຈາກຜົນກະທົບທາງດ້ານເສດ ຖະກິດ-ສັງຄົມ ຍ້ອນວ່າຕ້ອງໂສ້ການສະໜອງ ພາຍໃນ ແລະ ພາກພື້ນ ພັງທະລາຍລົງ, ພ້ອມທັງດ້ານລາຍ ຮັບຂອງຄົວເຮືອນ ແລະ ຄວາມຕ້ອງການຂອງຜູ້ບໍລິ ໂພກ[1].

ຂະແໜງອຸດສາຫະກໍາທ່ອງທ່ຽວ ແລະ ການ ບໍລິການ ອື່ນໆ ແມ່ນໄດ້ຮັບຜົນກະທົບທີ່ສຸດ, ມີການສູນເສຍ ທາງດ້ານເສດຖະກິດສູງ, ການເພີ່ມ ຂຶ້ນຂອງອັດຕາ ຫວ່າງງານ (ເພີ່ມຈາກລະດັບສະເລ່ຍ 2% ເຖິງ 25%), ແລະ ການຄາດຄະເນການຂະຫຍາຍຕົວຂອງເສດຖະ ກິດທີ່ຫຼຸດລົງໃນປີ 2020[1].

ສິ່ງນີ້ອາດຈະເຮັດໃຫ້ປະຊາຊົນ 214,000 ຄົນຫຼຸດລົງ ຫຼື ກັບຄືນສູ່ຄວາມທຸກຍາກອີກ, ຊຶ່ງເປັນສິ່ງທີ່ທ້າທາຍ ຕໍ່ກັບການບັນລຸເປົ້າໝາຍ ທີ 1 SDG (ຫຼຸດພົ້ນຈາກ ຄວາມທຸກຍາກໃນທຸກຮູບແບບທີ່ມີຢູ່ທຸກບ່ອນ) ແລະ ທີ 2 (ການລົບລ້າງຄວາມອຶດຢາກເທົ່າສູນ). ຂະແໜງ ກະສິກໍາ ໄດ້ປະສົບກັບຄວາມຫຍຸ້ງຍາກຈາກ ໄພນໍ້າ ຖ້ວມ ແລະ ໄພແຫ້ງແລ້ງ ກ່ອນການລະບາດ ຂອງ ພະຍາດໂຄວິດ. ສະນັ້ນ, ມັນມີຄວາມສ່ຽງສູງ, ມີຜົນ ກະທົບທາງລົບຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ, ຊີວິດການເປັນຢູ່, ການເປັນ ໜີ້ສິນ ແລະລາຍໄດ້ຫຼຸດລົງ.

ກຸ່ມທີ່ມີຄວາມສ່ຽງເຊັ່ນ: ເດັກນ້ອຍ ແລະ ໄວໜຸ່ມ, ຜູ້ທຸກຍາກ, ຊາວກະສິກອນຫາລ້ຽງຊີບ, ແລະ ແມ່ຍິງ ແມ່ນມີຄວາມສ່ຽງສູງ.



Food and Agriculture Organization of the United Nations

ຕົວຢ່າງ, ຜົນກະທົບທີ່ເປັນທາງລົບ ທີ່ບໍ່ພຽງແຕ່ກະທົບໃສ່ ແຫຼ່ງນ້ຳ ແລະ ພື້ນດິນ, ແຕ່ຍັງສົ່ງຜົນກະທົບຕໍ່ກັບ ສຸຂະພາບຂອງມະນຸດ,

ເຊິ່ງເປັນຜົນມາຈາກການໃຊ້ສານເຄມີ ທີ່ບໍ່ມີຄວາມຍືນຍົງ ແລະ ຜິດກົດໝາຍ ໃນການຂະບວນການຜະລິດກ້ວຍ ແລະ ສິນຄ້າກະສິກຳ ສົ່ງອອກອື່ນໆ ໃນສປປລາວ ທີ່ເປັນບັນຫາທີ່ຕ້ອງໄດ້ເອົາໃຈໃສ່ໃນທົ່ວປະເທດນະເວລາປະຈຸບັນນີ້, ທີ່ເປັນຜົນໃຫ້ມີການອອກໃຈແຈ້ງການຂອງນາຍຍົກລັດຖະມົນຕີ ທີ່ມີຈຸດປະສົງເພື່ອຫຼຸດຜ່ອນຜົນກະທົບດັ່ງກ່າວນີ້.

ເພື່ອສ້າງຜົນປະໂຫຍດທີ່ຍືນຍົງ ສໍາລັບທຸກຄົນ, ມັນເປັນສິ່ງສໍາຄັນທີ່ຈະຮັບປະກັນວ່າ ບໍ່ພຽງແຕ່ໃຫ້ມີການລົງທຶນທີ່ມີຈໍານວນຫຼາຍເທົ່ານັ້ນແຕ່ຍັງຕ້ອງມີການລົງທຶນທີ່ດີກວ່າເກົ່າ. ມັນມີຄວາມສໍາຄັນທີ່ສຸດໃນການເສີມຂະຫຍາຍ ແລະ ສົ່ງເສີມການລົງທຶນທີ່ມີຄວາມຮັບຜິດຊອບ.

## ບົດແນະນໍາອາຊຽນ ກ່ຽວກັບການລົງທຶນ ໃນສະບຽງອາຫານ, ການກະສິກໍາ, ແລະ ການລ້ຽງສັດ.

ໃນເດືອນກັນຍາ 2017, ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ອາຊຽນ (AMAF) ໄດ້ຕົກລົງພັດທະນາ ບົດແນະນໍາອາຊຽນ ວ່າດ້ວຍການສົ່ງເສີມການລົງທຶນ ຢ່າງມີຄວາມຮັບຜິດຊອບໃນລະບົບສະບຽງອາຫານ, ກະສິກໍາ ແລະ ປ່າໄມ້ (ຕໍ່ໄປນີ້ເອີ້ນວ່າ "ບົດແນະນໍາ"). ບົດແນະນໍາ ສະບັບນີ້ ແມ່ນມີຂໍ້ມູນພື້ນຖານ ຈາກບົດແນະນໍາ ສໍາລັບການລົງທຶນທີ່ມີຄວາມຮັບຜິດຊອບໃນລະບົບກະສິກໍາ ແລະ ອາຫານ ຂອງຄະນະກໍາມະການ ຄວາມໝັ້ນຄົງດ້ານສະບຽງອາຫານໂລກ (CFS RAI) ແລະ ສະທ້ອນໃຫ້ເຫັນເຖິງລັກສະນະສະເພາະ ແລະ ສະພາບການຕົວຈິງຂອງປະເທດສະມາຊິກອາຊຽນ. ບົດແນະນໍາ ASEAN-RAI ແມ່ນໄດ້ຖືກຮັບຮອງເອົາໂດຍ ກອງປະຊຸມ ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ອາຊຽນ (AMAF) ໃນເດືອນຕຸລາ ປີ 2018.




https://www.aseanraiguidelines.org/resources

ຈຸດປະສົງຫຼັກຂອງບົດແນະນໍາ ແມ່ນເພື່ອສົ່ງເສີມການລົງທຶນຂະແໜງ ອາຫານ, ກະສິກໍາ - ລວມທັງການປະມົງ ແລະ ປ່າໄມ້ - ໃນພາກພື້ນອາຊຽນ ທີ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດພາກພື້ນ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ຮັບປະກັນສະບຽງອາຫານ ແລະ ຜົນປະໂຫຍດທີ່ເທົ່າທຽມກັນ, ພ້ອມທັງການນໍາໃຊ້ ຊັບພະຍາກອນທໍາມະຊາດຢ່າງຍືນຍົງ. ບົດແນະນໍາດັ່ງກ່າວ ຖືວ່າເປັນຫຼັກການທີ່ຈັດຕັ້ງປະຕິບັດທີ່ດີລະດັບສາກົນ ເພື່ອຮັບປະກັນວ່າ ການລົງທຶນດ້ານກະສິກໍາ ຂະໜາດໃຫຍ່ ແມ່ນການພັດທະນາທາງດ້ານສັງຄົມ, ເສດຖະກິດ, ແລະ ສິ່ງແວດລ້ອມ ຢ່າງຍືນຍົງ ແລະ ມີສ່ວນຮ່ວມ. ຫຼັກການເຫຼົ່ານີ້ ແມ່ນເຄື່ອງມືຄູ່ຮ່ວມການລົງທຶນທີ່ດີ - ສໍາລັບພາກລັດ, ເອກະຊົນ ແລະ ສັງຄົມພົນລະເຮືອນ - ເປັນແນວທາງອີງປະກອບສໍາຄັນຂອງການລົງທຶນໃນອະນາຄົດ. ບົດແນະນໍາດັ່ງກ່າວ ມີເປົ້າໝາຍເພື່ອເປັນພື້ນຖານຂອງການລົງທທຶນດ້ານກະສິກໍາຕ່າງໆໃນທົ່ວພາກພື້ນ.

https://www.aseanraiguidelines.org/

## ທາງອົງການ FAO ໄດ້ໃຫ້ການສະໜັບສະໜູນແນວໃດຕໍ່ກັບ ການລົງທຶນຢ່າງມີຄວາມຮັບຜິດຊອບ ໃນດ້ານລະບົບການກະສິກໍາ ແລະ ສະບຽງອາຫານ ໃນ ສປປ ລາວ?

ພາຍໃຕ້ກອບແຜນງານຂອງອົງການອາຫານ ແລະ ການກະເສດ ປະຈໍາ ສປປ ລາວ (FAO) ກ່ຽວກັບ "ການສະໜັບສະໜູນ ການລົງທຶນຢ່າງມີຄວາມຮັບຜິດຊອບ ໃນດ້ານລະບົບກະສິກໍາ ແລະ ສະບຽງອາຫານ", ທາງອົງການ FAO ໃຫ້ການສະໜັບສະໜູນ ແບບສະເພາະຕໍ່ກັບລັດຖະບານ ແຫ່ງ ສປປ ລາວ ເພື່ອປັບປຸງການລົງທຶນຢ່າງມີຄວາມຮັບຜິດຊອບໃນລະບົບກະສິກໍາ ແລະ ສະບຽງອາຫານ. ອົງການ FAO ສ້າງຄວາມຮັບຮູ້ກ່ຽວກັບບົດແນະນໍາອາຊຽນ ແລະ ຫຼັກການຂອງ CFS RAI ໃນບັນດາພາກສ່ວນທີ່ມີສ່ວນຮ່ວມ ແລະ ພ້ອມທັງເຮັດວຽກຮ່ວມກັບລັດຖະບານ ເພື່ອປັບປຸງສະພາບນະໂຍບາຍ, ກົດໝາຍ, ລະບຽບການ ແລະ ສະຖາບັນ ໃຫ້ດີຂຶ້ນໃນລະດັບຊາດ.

ໂດຍການໃຫ້ທຶນສະໜັບສະໜູນໂດຍ: Federal Ministry of Food and Agriculture

